ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
----------==000==--------

ອົງການອະທິໄອຍະການ
ປະຊາຊົນ ແຫ່ງ ສປປ ລາວ

ເລກທີ 05 /ອອປ

# ຄຳສັ່ງແນະນຳ

ອົງການໄອຍະການປະຊາຊົນ
ແຂວງຫຼວງພະບາງ
ເລກທີ 08
ວັນທີ 6.12.99

ເຖິງ : ໄອຍະການທະຫານຂັ້ນສູງ, ໄອຍະການປະຊາຊົນແຂວງ, ກຳແພງນະຄອນ ແລະ ເຂດພິເສດໃນທົ່ວປະເທດ.

ເລື່ອງ : ການກັກຂັງພາງ ແລະ ປ່ອຍຕົວພາງ, ການເອົາຕົວຜູ້ຖືກຫາ, ຈຳເລີຍ ຫຼື ນັກໂທດອອກໄປປິ່ນປົວ, ການປ່ອຍຕົວນັກໂທດກ່ອນກຳນົດ, ການປ່ອຍຕົວນັກໂທດທີ່ປະຕິບັດໂທດຄົບຕາມກຳນົດ, ການໂຍກຍ້າຍນັກໂທດ.

ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແຫ່ງ ສປປ ລາວ.

ອີງຕາມ ມາດຕາ 50, 51 ແລະ 80 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ອີງຕາມ ມາດຕາ 47 ຂອງກົດໝາຍອາຍາ.

ອີງຕາມ ບົດບັນທຶກກອງປະຊຸມພາກສ່ວນທີ່ກ່ຽວຂ້ອງ ( ມີອົງການອະທິໄອຍະການປະຊາຊົນ, ກະຊວງພາຍໃນ -ກົມໃຫຍ່ຕຳຫຼວດ, ກົມຍຸດຕິທຳ, ກະຊວງຍຸດຕິທຳ -ກົມຄຸ້ມຄອງລະບົບຍຸດຕິທຳ, ອົງການໄອຍະການທະຫານຂັ້ນສູງ ແລະ ສານປະຊາຊົນກຳແພງນະຄອນ ) ໄດ້ປຶກປຶກສາຫາລືກ່ຽວກັບວຽກງານການຄຸ້ມຄອງສະຖານທີ່ກັກຂັງ, ຄ້າຍຄຸມຂັງ-ດັດສ້າງ ສະບັບເລກທີ່ 05/ອອປ, ລົງວັນທີ່ 27 ເມສາ 1999.

ຕາມການຈັດຕັ້ງປະຕິບັດຕົວຈິງໃນໄລຍະຜ່ານມາ ກ່ຽວກັບການກັກຕົວ, ການຈັບຕົວ, ກັກຂັງເຮັດໄດ້ດີເຊັ່ນ: ການກັກຂັງ ແລະ ປ່ອຍຕົວພາງ, ການເອົາຜູ້ຖືກຫາ, ຈຳເລີຍ ຫຼື ນັກໂທດອອກໄປປິ່ນປົວ, ການປ່ອຍຕົວນັກໂທດກ່ອນກຳນົດໂດຍມີເງື່ອນໄຂ, ການປ່ອຍຕົວນັກໂທດ ທີ່ໄດ້ປະຕິບັດໂທດຄົບຕາມກຳນົດ ຫຼື ການໂຍກຍ້າຍນັກໂທດ ເຫັນວ່າຖືກຕ້ອງຕາມແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ ແລະ ລະບຽບການຕ່າງໆ ທີ່ອົງການກ່ຽວຂ້ອງໄດ້ວາງອອກເພື່ອປົກປັກຮັກສາລະບຽບກົດໝາຍຂອງບ້ານເມືອງ.

ເຖິງວ່າມີດ້ານດີທີ່ໄດ້ກ່າວມາຂ້າງເທິງນີ້, ພວກເຮົາຍັງມີດ້ານອ່ອນ ແລະ ຂໍ້ຄົງຄ້າງບາງບັນຫາເປັນຕົ້ນການປະຕິບັດນະໂຍບາຍ ຕໍ່ຜູ້ຖືກຫາ, ຈຳເລີຍ ຫຼື ນັກໂທດຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນໂດຍສະເພາະການຈັບຕົວ, ການກັບຂັງ ແລະ ປ່ອຍຕົວພາງ, ການເອົາຜູ້ຖືກຫາ ຫຼື ນັກໂທດໄປປິ່ນປົວ, ການປ່ອຍຕົວນັກໂທດກ່ອນກຳນົດໂດຍມີເງື່ອນໄຂ, ການປ່ອຍຕົວນັກໂທດທີ່ປະຕິບັດ

ຕໍ່ສັງຄົມແຕ່ກໍຕ້ອງອີງໃສ່ເງື່ອນໄຂມາດຕາ 51 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາເປັນຫລັກ.

- ການຕົກລົງປ່ອຍຕົວພາງ ຕາມຄຳຮ້ອງຂອງຜູ້ຖືກຫາ ຫຼືຈຳເລີຍ ຜູ້ຕາງໜ້າ ຫຼື ຄອບຄົວຂອງຜູ້ກ່ຽວໂດຍໃຫ້ມີການວາງຊັບຄ້ຳປະກັນນັ້ນ, ຊັບທີ່ນຳມາຄ້ຳປະກັນຕ້ອງເປັນເງິນສົດ ຫຼື ສິ່ງຂອງມີຄ່າຖ້າຜູ້ກ່ຽວບໍ່ມີຄວາມສາມາດໃນທາງນີ້ກໍໃຫ້ວາງຫຼັກຊັບຄ້ຳປະກັນກໍໄດ້ເຊັ່ນວ່າ: ໃບທະບຽນລົດ ທີ່ດິນ ຫຼື ເຮືອນຢູ່, ແຕ່ຊັບເຫຼົ່ານີ້ຕ້ອງບໍ່ໃຫ້ມີສ່ວນພົວພັນກັບການຊື້ຂາຍ, ມອບໂອນ, ຄ້ຳປະກັນ, ພົວພັນກັບຄະດີຖືກອາຍັດ ຫຼື ອື່ນໆ ໂດຍມີການຢັ້ງຢືນຈາກນາຍບ້ານ, ສານ ແລະ ບ່ອນຜູ້ກ່ຽວສັງກັດ ຫຼື ດຳລົງຊີວິດຢູ່ຮັບຮູ້ນຳ.

- ການຄ້ຳປະກັນດ້ວຍຫຼັກຊັບ ເຈົ້າໜ້າທີ່ ຫຼື ພະນັກງານຮັບຜິດຊອບດຳເນີນຄະດີຕ້ອງໃຫ້ຜູ້ຄ້ຳປະກັນອັດສຳເນົາໃບຕາດິນ, ໃບທະບຽນລົດ ຫຼື ໃບຢັ້ງຢືນຊັບ ສິ່ງຂອງເຫຼົ່ານີ້ປະກອບກັບໃບຢັ້ງຢືນທີ່ຢູ່, ສຳເນົາບັດປະຈຳຕົວ ແລະ ສຳມະໂນຄົວ, ສຳເນົາດັ່ງກ່າວຕ້ອງໄດ້ກວດກາຄືນທຽບກັບສະບັບເດີມ. ເມື່ອເຫັນວ່າຖືກຕ້ອງ ແລະ ຄົບຖ້ວນແລ້ວຕ້ອງເຮັດບົດບັນທຶກມອບ-ຮັບໂດຍລະບຸເຖິງຊັບສິ່ງຂອງ ຫຼື ຫຼັກຊັບທີ່ນຳມາວາງຄ້ຳປະກັນນັ້ນໃຫ້ລະອຽດຈະແຈ້ງ ແລະ ພ້ອມກັນລົງລາຍເຊັນຮັບຮູ້ນຳກັນ. ບົດບັນທຶກຄ້ຳປະກັນມອບໃຫ້ຜູ້ກ່ຽວສະບັບໜຶ່ງ, ເກັບໄວ້ສຳເນົາສະບັບໜຶ່ງ ແລ ະຄັດຕິດໃສ່ໃບສະເໜີຂໍຄຳສັ່ງປ່ອຍຕົວພາງອີກສະບັບໜຶ່ງ, ເພື່ອໃຫ້ໄອຍະການປະຊາຊົນຜູ້ອອກຄຳສັ່ງຮັບຮູ້ນຳ. ຈາກນັ້ນຈຶ່ງເຮັດຈົດໝາຍ ຫຼື ແຈ້ງການເປັນລາຍລັກອັກສອນໃຫ້ອຳນາດການປົກຄອງບ່ອນທີ່ຊັບຕັ້ງຢູ່ ຫຼື ບ່ອນຜູ້ກ່ຽວດຳລົງຊີວິດຮັບຮູ້ນຳ ເພື່ອຫຼີກເວັ້ນບໍ່ໃຫ້ຜູ້ຄ້ຳປະກັນນຳເອົາຊັບນັ້ນໄປເຄື່ອນໄຫວທາງອື່ນໂດຍບໍ່ຖືກຕ້ອງໃນເມື່ອ ການດຳເນີນຄະດີຫາກຍັງບໍ່ທັນສິ້ນສຸດລົງເທື່ອ, ຊັບ ຫຼື ຫຼັກຊັບທີ່ເປັນຂອງການດຳເນີນຄະດີຕ້ອງໄດ້ຮັກສາໄວ້ຕາມທີ່ກ່າວມາຂ້າງເທິງນີ້.

ຄຳສັ່ງກັກຂັງພາງຂອງໄອຍະການ ຫຼື ສານປະຊາຊົນນອກຈາກມອບໃຫ້ເຈົ້າໜ້າ ທີ່ຕຳຫຼວດຄ້າຍຄຸມຂັງແລະເກັບໄວ້ສະບັບໜຶ່ງແລ້ວ ຕ້ອງມອບໃຫ້ຜູ້ຖືກຫາ ຫຼື ຈຳເລີຍອີກໜຶ່ງສະບັບພ້ອມກັນນັ້ນຕ້ອງແຈ້ງເປັນລາຍລັກອັກສອນ ( ຄຳສັ່ງປ່ອຍຕົວພາງ ) ໃຫ້ອຳນາດການປົກຄອງບ້ານ ຫຼື ບ່ອນຜູ້ກ່ຽວດຳລົງຊີວິດຢູ່ຮັບຮູ້ນຳ.

II. <u>ການເອົາຜູ້ຖືກຫາ, ຈຳເລີຍ ຫຼື ນັກໂທດອອກປິ່ນປົວ.</u>

1. ການເອົາຜູ້ຕ້ອງຫາ, ຈຳເລີຍ ຫຼື ນັກໂທດອອກປິ່ນປົວຢູ່ນອກສະຖານທີ່ກັກຂັງ, ຄ້າຍຄຸມຂັງ-ດັດສ້າງ ຕາມຄຳຮ້ອງຂໍຂອງຜູ້ຖືກຫາ, ຈຳເລີຍ, ນັກໂທດ, ຄອບຄົວ ຫຼື ຍາດພີ່ນ້ອງຂອງຜູ້ກ່ຽວນັ້ນ, ເຈົ້າໜ້າທີ່ຕຳຫຼວດ ຫຼື ໄອຍະການປະຊາຊົນຜູ້ຄົ້ນຄວ້າຄຳຮ້ອງຕ້ອງປະສານສົມທົບ ກັບພະນັກງານແພດປະຈຳໂຮງໝໍຫຼືແພດປະຈຳສະຖານທີ່ກັກຂັງ,ຄ້າຍຄຸມຂັງ-ດັດສ້າງ ລົງໄປກວດ ສຸຂະພາບຂອງຜູ້ຖືກຫາ, ຈຳເລີຍ ຫຼື ນັກໂທດຕົວຈິງ, ຖ້າພົບວ່າຜູ້ກ່ຽວເຈັບເປັນດ້ວຍພະຍາດຮ້າຍແຮງ, ພະຍາດຊຳເຮື້ອຕິດແປດ ຫຼື ອື່ນໆທີ່ເປັນອັນຕະລາຍຕໍ່ໝູ່ຄູ່, ຕໍ່ສຸຂະພາບ ແລະ ຊີວິດຜູ້ກ່ຽວເອງ

1. ການໂຍກຍ້າຍນັກໂທດແຕ່ຂັ້ນສູນກາງໄປສືບຕໍ່ປະຕິບັດໂທດຢູ່ທ້ອງຖິ່ນອື່ນຕາມຄໍາຮ້ອງຂໍຂອງນັກໂທດ, ຄອບຄົວ ຫຼື ຍາດພີ່ນ້ອງນັ້ນ, ເຈົ້າໜ້າທີ່ກະຊວງພາຍໃນ ( ກົມກອງທີ່ກ່ຽວຂ້ອງ ) ຕ້ອງເປັນຜູ້ຮັບຜິດຊອບຄົ້ນຄ້ວາພິຈາລະນາໂດຍປະສານສົມທົບກັບອົງການອະໄຍການປະຊາຊົນ, ( ກົມທີ່ກ່ຽວຂ້ອງ ) ກໍລະນີຈໍາເປັນອົງການອະໄຍການປະຊາຊົນອາດຈະຈັດຕັ້ງເປີດກອງປະຊຸມຄົ້ນຄ້ວາ ປຶກສາຫາລືຮ່ວມກັບກະຊວງພາຍໃນກໍໄດ້ ເພື່ອຮັບປະກັນຄວາມເປັນເອກະພາບກັນໃນການພິຈາລະນາແກ້ໄຂບັນຫາຮ່ວມກັນ.
2. ການຮ້ອງຂໍໂຍກຍ້າຍນັກໂທດແຕ່ທ້ອງຖິ່ນໄປສືບຕໍ່ປະຕິບັດໂທດຢູ່ສູນກາງ, ເຈົ້າໜ້າທີ່ກອງບັນຊາການ ປກສ ແຂວງ, ກໍາແພງນະຄອນ, ເຂດພິເສດໄຊສົມບູນ ຕ້ອງໄດ້ພົວພັນປະສານສົມທົບກັບໄອຍະການປະຊາຊົນ ທີ່ກ່ຽວຂ້ອງມີຄວາມເຫັນເປັນເອກະພາບກັນ, ຖ້າມີຄວາມຈໍາເປັນຕ້ອງໄດ້ຂໍຄໍາເຫັນຈາກຄະນະພັກຜູ້ຊີ້ນໍາວຽກງານຕຸລາການແຂວງ, ກໍາແພງນະຄອນ, ເຂດພິເສດເສຍກ່ອນ, ແລ້ວຈຶ່ງນໍາສະເໜີຕໍ່ກະຊວງພາຍໃນ ຫຼື ອົງການອະໄອຍະການປະຊາຊົນຄົ້ນຄ້ວາພິຈາລະນາ.
3. ການຮ້ອງຂໍໂຍກຍ້າຍນັກໂທດແຕ່ແຂວງນີ້ໄປສືບຕໍ່ປະຕິບັດໂທດຢູ່ແຂວງອື່ນ, ເຈົ້າໜ້າທີ່ກອງບັນຊາການ ປກສ ແຂວງ, ກໍາແພງນະຄອນ, ເຂດພິເສດໄຊສົມບູນ ຕ້ອງພົວພັນປະສານສົມທົບກັບໄອຍະການປະຊາຊົນແຂວງທີ່ກ່ຽວຂ້ອງ ມີຄວາມເຫັນເປັນເອກະພາບກັນ, ຖ້າເຫັນວ່າມີຄວາມຈໍາເປັນຕ້ອງໄດ້ຂໍຄໍາເຫັນຈາກຄະນະພັກແຂວງ, ກໍາແພງນະຄອນ, ເຂດພິເສດ, ຜູ້ຊີ້ນໍາວຽກງານຕຸລາການເສຍກ່ອນຈຶ່ງນໍາສະເໜີຕໍ່ກະຊວງພາຍໃນ ຫຼື ອົງການອະໄອຍະການປະຊາຊົນ ເປັນຜູ້ມີສິດຄົ້ນຄ້ວາພິຈາລະນາບັນຫາດັ່ງກ່າວ.

+ ການປະກອບເອກະສານຕ້ອງເຊັນຜ່ານອໍານາດການປົກຄອງທ້ອງຖິ່ນ, ໄອຍະການປະຊາຊົນ, ກອງບັນຊາການ ປກສ ແລະ ຫ້ອງວ່າການປົກຄອງແຂວງ, ກໍາແພງນະຄອນ, ເຂດພິເສດ ໂດຍເຮັດເປັນສອງສະບັບຍື່ນໄປຍັງອົງການອະໄອຍະການປະຊາຊົນ ແຫ່ງ ສປປ ລາວ ແລະ ກະຊວງພາຍໃນ ໝາຍຄວາມວ່າທາງແຂວງ, ກໍາແພງນະຄອນ, ເຂດພິເສດ ບໍ່ມີສິດຈະໂຍກຍ້າຍນັກໂທດໃຫ້ກັນໄດ້, ຖ້າກໍລະນີຈໍາເປັນຕ້ອງນໍາສະເໜີຕໍ່ການຈັດຕັ້ງຂອງຕົນໂດຍດ່ວນ.

+ ທຶນໃນການໃຊ້ຈ່າຍໂຍກຍ້າຍນັກໂທດ ລັດຈະບໍ່ມີສ່ວນຮັບຜິດຊອບ, ໝາຍຄວາມວ່າຍາດພີ່ນ້ອງຂອງນັກໂທດເປັນຜູ້ຮັບຜິດຊອບໃຊ້ຈ່າຍເອົາເອງທັງໝົດ.

+ ການໃຊ້ແທນທາງແພ່ງ ແລະ ໂທດປັບໃໝສານປະຊາຊົນທ້ອງຖິ່ນໃດຕັດສິນ ແມ່ນໃຫ້ນັກໂທດຜູ້ທີ່ຈະຖືກໂຍກຍ້າຍສໍາລະຢູ່ສານປະຊາຊົນທ້ອງຖິ່ນນັ້ນໃຫ້ໝົດ, ກໍລະນີຈໍາເປັນຕ້ອງໄດ້ເຮັດບົດບັນທຶກການສໍາລະສະສາງຢູ່ສານປະຊາຊົນທ້ອງຖິ່ນນັ້ນ ເພື່ອໃຫ້ຜູ້ກ່ຽວສືບຕໍ່ປະຕິບັດໃຫ້ສໍາເລັດ.

ທຸກໆ ຄໍາສັ່ງແນະນໍາ ແລະ ຄໍາແນະນໍາໃນເມື່ອກ່ອນຫາກຂັດກັບຄໍາສັ່ງແນະນໍາສະບັບນີ້ລ້ວນແລ້ວແຕ່ຖືກລຶບລ້າງປ່ຽນແທນໂດຍຄໍາສັ່ງແນະນໍາສະບັບນີ້.

ເພື່ອໂອຍະການທະຫານຂັ້ນສູງ, ໂອຍະການປະຊາຊົນແຂວງ, ກຳແພງນະຄອນ, ແລະ ເຂດພິເສດໄຊສົມບູນໄດ້ຮັບຄຳສັ່ງແນະນຳສະບັບນີ້ແລ້ວ ໃຫ້ຄົ້ນຄ້ວາ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຈິດໃຈຂອງຄຳສັ່ງສະບັບນີ້ໃຫ້ປະກົດຜົນເປັນຈິງດ້ວຍ.

ວຽງຈັນ, ວັນທີ 25-11-99

ຮ. ອະທິໂອຍະການປະຊາຊົນ.

ສີອນຈັນ ສຸດທິດາ

ບ່ອນສົ່ງ:

- ລັດຖະມົນຕີກະຊວງພາຍໃນ ເພື່ອຊາບ 1 ສະບັບ.
- ຄະນະກົມໃຫຍ່ຕຳຫຼວດ ເພື່ອຊາບ 1 ສະບັບ.
- ຄະນະກົມຕຳຫຼວດຄ້າຍຄຸມຂັງ-ດັດສ້າງ ເພື່ອຊາບ 1 ສະບັບ.
- ຄະນະຮັບຜິດຊອບຄ້າຍຄຸມຂັງ-ດັດສ້າງ,ກຳແພງນະຄອນເຂດພິເສດໄຊສົມບູນ ແຂວງລະ 1 ສະບັບ.
- ກອງບັນຊາການ ປກສ ແຂວງ,ກຳແພງນະຄອນ, ເຂດພິເສດໄຊສົມບູນ ເພື່ອຊາບ ແຂວງລະ 1 ສະບັບ.
- ໂອຍະການທະຫານຂັ້ນສູງ ເພື່ອຊາບ 1 ສະບັບ.
- ໂອຍະການປະຊາຊົນແຂວງ, ກຳແພງນະຄອນ ແລະ ເຂດພິເສດໄຊສົມບູນ ແຂວງລະ 1 ສະບັບ.
- ເກັບມ້ຽນສຳເນົາ 1 ສະບັບ.